ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ 1009 /ອຊ

ອຸດົມໄຊ, ວັນທີ 31.08.2023

# ຂໍ້ຕົກລົງ
## ວ່າດ້ວຍ ການນໍາໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ ຢູ່ແຂວງອຸດົມໄຊ

- **ອີງຕາມ** ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ), ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- **ອີງຕາມ** ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ (ສະບັບປັບປຸງ), ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- **ອີງຕາມ** ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ສະບັບເລກທີ 61/ສພຊ, ລົງວັນທີ່ 15 ກໍລະກົດ 2015;
- **ອີງຕາມ** ມະຕິກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຊຸດທີ II ສະບັບເລກທີ 987 /ສພຂ, ລົງວັນທີ່ 04 ສິງຫາ 2023.

## ເຈົ້າແຂວງ ຕົກລົງ:
### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິຜົນສູງ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໃຫ້ສັງຄົມມີເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາ ແຂວງອຸດົມໄຊ.

**ມາດຕາ 2 ການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ**

ການນຳໃຊ້ສື່ສັງຄົມອອນລາຍ ແມ່ນການນຳສະເໜີ, ການສົ່ງ, ການຮັບ, ການສົ່ງຕໍ່, ການມີຄຳເຫັນຕໍ່ເນື້ອໃນຂໍ້ມູນຂ່າວສານສູ່ສາທາລະນະ ໂດຍນຳໃຊ້ຮູບແບບການສື່ສານຜ່ານລະບົບອິນເຕີເນັດ.

ການສະກັດກັ້ນບັນຫາ ສື່ສັງຄົມອອນລາຍ ແມ່ນການເຄື່ອນໄຫວຈຳກັດ, ຄວບຄຸມ ແລະ ສະກັດກັ້ນຂໍ້ມູນ ຂ່າວສານ ທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ຜ່ານສື່ສັງຄົມອອນລາຍ ທີ່ກຳນົດໄວ້ໃນຂໍ້ຫ້າມຂອງຂໍ້ຕົກລົງສະບັບນີ້ ແລະ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ບໍ່ໃຫ້ແຜ່ລາມກວ້າງອອກ ສ້າງຄວາມເສຍຫາຍໃຫ້ແກ່ພັກ-ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

ການແກ້ໄຂບັນຫາ ສື່ສັງຄົມອອນລາຍ ແມ່ນການເຄື່ອນໄຫວທີ່ພົວພັນຫຼາຍວິທີການ ເຊັ່ນ: ການໂຄສະນາເຜີຍແຜ່, ການຝຶກອົບຮົມໃຫ້ຄວາມຮູ້, ການເຝົ້າລະວັງ ແລະ ການຕິດຕາມການເຄື່ອນໄຫວຂອງຂໍ້ມູນຂ່າວສານ, ການເກັບກຳສະຖິຕິ, ການໃຫ້ຄຳປຶກສາ, ການດຳເນີນການສືບສວນ-ສອບສວນ ແລະ ກ້າວໄປເຖິງດຳເນີນຄະດີຕາມຂັ້ນຕອນ ຂອງກົດໝາຍ.

**ມາດຕາ 3 ການອະທິບາຍສັບ**

ຄຳສັບ ທີ່ໃຊ້ໃນຂໍ້ຕົກລົງ ມີຄວາມໝາຍ ດັ່ງນີ້:

1. **ສື່ສັງຄົມອອນລາຍ** ໝາຍເຖິງ ຮູບແບບການສື່ສານ ແລະ ການເຜີຍແຜ່ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ, ຊຶ່ງບຸກຄົນທົ່ວໄປສາມາດນຳສະເໜີ, ສົ່ງ, ຮັບ, ສົ່ງຕໍ່, ມີຄຳເຫັນ ຕໍ່ເນື້ອໃນຂໍ້ມູນຂ່າວສານ ເປັນຕົ້ນ ເຟສບຸກ, ຕິກຕ໋ອກ, ທະວິດເຕີ, ຢູທູບ ແລະ ອື່ນໆ;

2. **ທະບຽນສ່ວນຕົວໃນສື່ສັງຄົມອອນລາຍ** ໝາຍເຖິງ ໜ້າເວັບທີ່ໄດ້ສ້າງຂຶ້ນໂດຍຜ່ານສື່ສັງຄົມອອນລາຍ ຊຶ່ງຜູ້ລົງທະບຽນ ຫຼື ອົງການຈັດຕັ້ງ ເປັນເຈົ້າຂອງໜ້າເວັບນັ້ນ ແລະ ເປັນຜູ້ຄຸ້ມຄອງເນື້ອໃນຂໍ້ມູນຂ່າວສານເອງ ເຊັ່ນ: https://www.facebook.com/dtcodx;

3. **ຜູ້ໃຫ້ບໍລິການອິນເຕີເນັດ** ໝາຍເຖິງ ຜູ້ໃຫ້ບໍລິການ ເຊື່ອມຕໍ່ອິນເຕີເນັດ ໃຫ້ແກ່ຜູ້ໃຊ້ບໍລິການສາມາດເຊື່ອມຕໍ່ ເຂົ້າຫາອິນເຕີເນັດໄດ້;

4. **ຜູ້ໃຊ້ບໍລິການອິນເຕີເນັດ** ໝາຍເຖິງ ຜູ້ທີ່ໄດ້ຮັບການບໍລິການ ເຊື່ອມຕໍ່ເຂົ້າຫາອິນເຕີເນັດ ໃນຮູບແບບຕ່າງໆ ເພື່ອອ່ານ, ຂຽນ, ສົ່ງ, ສົ່ງຕໍ່ ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ;

5. **ຄວາມປອດໄພໄຊເບີ** ໝາຍເຖິງ ການນຳເຄື່ອງມືທາງດ້ານເຕັກໂນໂລຊີ ແລະ ວິທີການປະຕິບັດເພື່ອປ້ອງກັນ ແລະ ຮັບມື, ຕອບໂຕ້ໄພຄຸກຄາມດ້ານລະບົບຄອມພິວເຕີ, ໂຄງສ້າງພື້ນຖານດ້ານຂໍ້ມູນ ຂ່າວສານ, ລະບົບໂປຣແກຣມ ແລະ ອື່ນໆ ທີ່ກ່ຽວຂ້ອງ;

6. **ຄວາມປອດໄພ ໃນການນຳໃຊ້ຂໍ້ມູນ ຂ່າວສານ** ໝາຍເຖິງ ການຮັກສາຂໍ້ມູນ ຂ່າວສານ ແລະ ລະບົບຂໍ້ມູນ ຂ່າວສານ ເພື່ອບໍ່ໃຫ້ຖືກນຳໃຊ້, ປອມແປງ ຫຼື ທຳລາຍ ຈາກບຸກຄົນອື່ນທີ່ບໍ່ໄດ້ຮັບອະນຸຍາດ.

**ມາດຕາ 4 ນະໂຍບາຍ ກ່ຽວກັບການນຳໃຊ້ສື່ສັງຄົມອອນລາຍ**

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວວຽກງານ ຢູ່ ສປປ ລາວ ນຳໃຊ້ສື່ສັງຄົມອອນລາຍ ເຂົ້າໃນ ການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ໂດຍສະເພາະ ໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ການຄ້າ, ການສຶກສາ, ສາທາລະນະສຸກ, ການຄົ້ນຄວ້າວິໄຈທາງວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ແລະ ອື່ນໆ ເພື່ອເພີ່ມປະສິດທິພາບ, ຄຸນນະພາບ ໃນການຈັດຕັ້ງປະຕິບັດວຽກງານ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ມີຄວາມສະດວກ, ວ່ອງໄວ, ປະຢັດ, ຍຸຕິທຳ ແລະ ປອດໄພ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ປະຕິບັດນະໂຍບາຍຕາມກົດໝາຍ ແລະ ລະບຽບການ.

ລັດ ຖືເອົາວຽກງານຊຸກຍູ້, ສົ່ງເສີມການນຳໃຊ້ ສື່ສັງຄົມອອນລາຍ ເປັນວຽກງານຕົ້ນຕໍ ແລະ ຖືເອົາວຽກງານການສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ ເປັນວຽກສຳຄັນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂ ບັນຫາສື່ສັງຄົມອອນລາຍ**

ການດຳເນີນວຽກງານການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ລະບຽບການທີ່ກ່ຽວຂ້ອງ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ຍຸດທະສາດ ແລະ ແຜນການພັດທະນາວຽກງານຄວາມປອດໄພໄຊເບີ ແຕ່ລະໄລຍະ;

2. ຮັບປະກັນຄວາມລັບຂອງພັກ-ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ຮັບປະກັນຄຸນນະພາບ, ຄວາມເປັນຈິງ, ຄວາມໝັ້ນຄົງ, ຄວາມປອດໄພ, ຄວາມວ່ອງໄວ, ຄວາມໂປ່ງໃສ ແລະ ຍຸຕິທຳ;

4. ຮັບປະກັນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ດ້ວຍການປ້ອງກັນ, ການຕອບຕ້ານ, ການສະກັດກັ້ນການສວຍໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ວຽກງານດັ່ງກ່າວ;

5. ສະເໝີພາບຕໍ່ໜ້າກົດໝາຍ, ບໍ່ເລືອກປະຕິບັດ ແລະ ແຂ່ງຂັນຢ່າງເປັນທຳໃນການຜະລິດ ແລະ ການບໍລິການ.

**ມາດຕາ 6 ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ທີ່ກ່ຽວຂ້ອງໃນການນຳໃຊ້ອິນເຕີເນັດ, ສື່ສັງຄົມອອນລາຍ ຢູ່ພາຍໃນແຂວງອຸດົມໄຊ.

## ໝວດທີ 2
## ການເຜີຍແຜ່ ຂໍ້ມູນ ຂ່າວສານຜ່ານສື່ສັງຄົມອອນລາຍ

**ມາດຕາ 7 ການເຜີຍແຜ່ ຂໍ້ມູນ ຂ່າວສານ ຜ່ານສື່ສັງຄົມອອນລາຍ**

ການເຜີຍແຜ່ຂໍ້ມູນ ຂ່າວສານ ຜ່ານສື່ສັງຄົມອອນລາຍ ແມ່ນການນຳເອົາຂໍ້ຄວາມ, ຮູບ, ພາບເຄື່ອນໄຫວ, ສຽງ, ວີດີໂອ ເຂົ້າສູ່ລະບົບອິນເຕີເນັດ ເພື່ອນຳສະເໜີ, ມີຄຳເຫັນ, ແລກປ່ຽນ, ສົ່ງ ຫຼື ສົ່ງຕໍ່ໃຫ້ແກ່ໜຶ່ງ ຫຼື ຫຼາຍຄົນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງສາມາດເຜີຍແຜ່ຂໍ້ມູນ ຂ່າວສານຜ່ານສື່ສັງຄົມອອນລາຍ ແຕ່ຕ້ອງເປັນເນື້ອໃນຂໍ້ມູນ ຂ່າວສານ ທີ່ອະນຸຍາດໃຫ້ເຜີຍແຜ່ ແລະ ລະບຸແຫຼ່ງທີ່ມາຂອງຂໍ້ມູນ ຂ່າວສານ ຢ່າງຈະແຈ້ງ ແລະ ຖືກຕ້ອງຕາມຄວາມເປັນຈິງ.

ເຈົ້າຂອງທະບຽນສ່ວນຕົວໃນສື່ສັງຄົມອອນລາຍ ຕ້ອງກວດກາເນື້ອໃນຂໍ້ມູນ ຂ່າວສານ ໃຫ້ຖືກຕ້ອງກ່ອນຈະເຜີຍແຜ່ໃນໜ້າເວັບຂອງຕົນ.

ຂໍ້ມູນ ຂ່າວສານ ທີ່ບໍ່ໄດ້ຜ່ານສື່ທາງການ ຫຼື ສຳນັກງານສື່ ທີ່ຂຶ້ນທະບຽນສ່ວນຕົວນຳໃຊ້ສື່ສັງຄົມອອນລາຍເປັນສື່ທາງການທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແມ່ນບໍ່ສາມາດໃຊ້ທາງການໄດ້.

**ມາດຕາ 8 ເນື້ອໃນຂໍ້ມູນ ຂ່າວສານ ທີ່ອະນຸຍາດໃຫ້ເຜີຍແຜ່ ຜ່ານສື່ສັງຄົມອອນລາຍ**

ເນື້ອໃນຂໍ້ມູນ ຂ່າວສານ ທີ່ອະນຸຍາດໃຫ້ເຜີຍແຜ່ຜ່ານສື່ສັງຄົມອອນລາຍ ແມ່ນເນື້ອໃນທີ່ມີລັກສະນະສ້າງສັນ, ໃຫ້ສະລະຄວາມຮູ້, ເປັນປະໂຫຍດທາງສັງຄົມ ແລະ ເນື້ອໃນທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ.

**ມາດຕາ 9 ການຂຶ້ນທະບຽນສ່ວນຕົວນຳໃຊ້ສື່ສັງຄົມອອນລາຍເປັນສື່ທາງການ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈະນຳໃຊ້ສື່ສັງຄົມອອນລາຍ ເປັນສື່ທາງການ ຕ້ອງໄດ້ຂໍອະນຸຍາດຈາກພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 10 ຄວາມປອດໄພການນຳໃຊ້ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ຂໍ້ມູນ ຂ່າວສານ ຜ່ານສື່ສັງຄົມອອນລາຍ ຕ້ອງປະຕິບັດຕາມມາດຕະຖານທີ່ກຳນົດໄວ້ໃນລະບຽບການ ແລະ ຄຳແນະນຳດ້ານຄວາມປອດໄພຂອງຜູ້ໃຫ້ບໍລິການສື່ສັງຄົມອອນລາຍ ຢ່າງເຂັ້ມງວດ ເພື່ອຮັບປະກັນຄວາມປອດໄພ ໃນການນຳໃຊ້ຂໍ້ມູນສ່ວນຕົວ ແລະ ຍັງເປັນການສ້າງເງື່ອນໄຂບໍ່ໃຫ້ບຸກຄົນອື່ນສວຍໃຊ້ໃນທາງຜິດກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ວຽກງານການສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ

### ມາດຕາ 11 ວຽກງານການສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ

ວຽກງານການສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ ມີດັ່ງນີ້:

1. ການຈັດຕັ້ງໂຄສະນາເຜີຍແຜ່;
2. ການຝຶກອົບຮົມໃຫ້ຄວາມຮູ້;
3. ການຕິດຕາມການເຄື່ອນໄຫວຂອງຂໍ້ມູນ ຂ່າວສານ;
4. ການເກັບກໍາສະຖິຕິ;
5. ການໃຫ້ຄໍາປຶກສາ;
6. ການແຈ້ງເຫດສຸກເສີນ;
7. ການດໍາເນີນການແກ້ໄຂທາງເຕັກນິກ ແລະ ການຕອບໂຕ້;
8. ການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ.

### ມາດຕາ 12 ການຈັດຕັ້ງໂຄສະນາເຜີຍແຜ່

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ເປັນເຈົ້າການໃນການສ້າງ ແລະ ໂຄສະນາເຜີຍແຜ່ນິຕິກໍາ, ລະບຽບການກ່ຽວກັບວຽກງານອິນເຕີເນັດ, ຄວາມປອດໄພໄຊເບີ ແລະ ສ້າງປຶ້ມຄູ່ມື, ແຜ່ນໂຄສະນາ, ສື່ສິ່ງພິມ ແລະ ອື່ນໆ ກ່ຽວກັບການປ້ອງກັນໄພທາງລະບົບອິນເຕີເນັດ, ການນໍາໃຊ້ສື່ສັງຄົມອອນລາຍຢ່າງປອດໄພ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່ ໃນຂອບເຂດທົ່ວແຂວງ.

### ມາດຕາ 13 ການຝຶກອົບຮົມໃຫ້ຄວາມຮູ້

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຝຶກອົບຮົມໃຫ້ຄວາມຮູ້ແກ່ພະນັກງານ, ເຈົ້າໜ້າທີ່ກ່ຽວຂ້ອງກ່ຽວກັບວຽກງານອິນເຕີເນັດ, ຄວາມປອດໄພໄຊເບີ, ການນໍາໃຊ້ສື່ສັງຄົມອອນລາຍ.

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ປະສານສົມທົບກັບ ພະແນກ ສຶກສາທິການ ແລະ ກິລາ ແຂວງ ເພື່ອນໍາເອົາວິຊາດ້ານຄວາມປອດໄພທາງລະບົບຂໍ້ມູນ ຂ່າວສານ ສອດແຊກເຂົ້າໃນການຮຽນ-ການສອນ ຂອງບົດຮຽນວິຊາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໃນລະດັບສາມັນສຶກສາ.

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຝຶກອົບຮົມ, ການສ້າງກິດຈະກໍາໃຫ້ຄວາມຮູ້ດ້ານຄວາມປອດໄພທາງລະບົບຂໍ້ມູນ ຂ່າວສານ, ການນໍາໃຊ້ລະບົບອິນເຕີເນັດ, ການນໍາໃຊ້ລະບົບຄອມພິວເຕີ, ການນໍາໃຊ້ລະບົບສື່ສັງຄົມອອນລາຍ ເພື່ອໃຫ້ຮູ້ເຕັກນິກການຄຸ້ມຄອງ ແລະ ນໍາໃຊ້, ວິທີປ້ອງກັນຂໍ້ມູນ ແລະ ປຸກຈິດສໍານຶກໃນການນໍາໃຊ້ອິນເຕີເນັດໃຫ້ມີປະໂຫຍດ ຢູ່ຕາມອົງການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ສະຖາບັນການສຶກສາ ພາຍໃນແຂວງ.

### ມາດຕາ 14 ການຕິດຕາມການເຄື່ອນໄຫວຂອງຂໍ້ມູນ ຂ່າວສານ;

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ເປັນຜູ້ເຝົ້າລະວັງ ດ້ວຍການຕິດຕາມ, ກວດກາ, ແນະນໍາ, ແຈ້ງເຕືອນ, ປ້ອງກັນ ແລະ ຕອບໂຕ້ໄພອັນຕະລາຍ ທີ່ເກີດຂຶ້ນທາງລະບົບອິນເຕີເນັດ.

ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ ເປັນຜູ້ຕິດຕາມການເຄື່ອນໄຫວຂອງຂໍ້ມູນ ຂ່າວສານ ທີ່ເຜີຍແຜ່ຜ່ານສື່ສັງຄົມອອນລາຍ ດ້ວຍການຕິດຕາມ, ວິເຄາະ-ວິໄຈ, ຕອບໂຕ້ບັນຫາຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງ ແລະ ເປັນໄພອັນຕະລາຍຕ່າງໆ ຕໍ່ສັງຄົມ ແລະ ປະເທດຊາດ.

**ມາດຕາ 15 ການເກັບກຳສະຖິຕິ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ ຕ້ອງເກັບກຳສະຖິຕິ ແລະ ສ້າງຖານຂໍ້ມູນ ກ່ຽວກັບບັນຫາສື່ສັງຄົມອອນລາຍທີ່ເກີດຂຶ້ນ ພ້ອມທັງສຶກສາຄົ້ນຄວ້າເປັນແຕ່ລະໄລຍະ ເພື່ອຊອກຮູ້ເງື່ອນໄຂ ແລະ ສາເຫດທີ່ພາໃຫ້ເກີດປະກົດການຫຍໍ້ທໍ້ດັ່ງກ່າວ.

**ມາດຕາ 16 ການໃຫ້ຄຳປຶກສາ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ເປັນຜູ້ໃຫ້ຄຳປຶກສາ, ແນະນຳວິທີການນຳໃຊ້, ການປ້ອງກັນ ແລະ ແກ້ໄຂທາງດ້ານເຕັກນິກ ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອຫຼຸດຜ່ອນບັນຫາທີ່ເກີດຂຶ້ນໃນການນຳໃຊ້ສື່ສັງຄົມອອນລາຍທີ່ບໍ່ປອດໄພ ແລະ ໄພຄຸກຄາມຕ່າງໆ ຜ່ານອິນເຕີເນັດ.

**ມາດຕາ 17 ການແຈ້ງເຫດສຸກເສີນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ນຳໃຊ້ລະບົບອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ຢູ່ແຂວງອຸດົມໄຊ ຕ້ອງແຈ້ງເຫດສຸກເສີນກ່ຽວກັບໄພຄຸກຄາມທາງອິນເຕີເນັດ ທີ່ເກີດຂຶ້ນກັບຕົນ ຕໍ່ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ.

ການແຈ້ງເຫດສຸກເສີນ ສາມາດດຳເນີນດ້ວຍວິທີການ ດັ່ງນີ້:

1. ໃບແຈ້ງເຫດຕາມແບບພິມ;
2. ເວັບໄຊ, ຈົດໝາຍເອເລັກໂຕຣນິກ, ໂທລະສັບ;
3. ວິທີການອື່ນ.

**ມາດຕາ 18 ການດຳເນີນການແກ້ໄຂທາງເຕັກນິກ ແລະ ການຕອບໂຕ້**

ພາຍຫຼັງໄດ້ຮັບແຈ້ງເຫດສຸກເສີນກ່ຽວກັບໄພຄຸກຄາມທາງອິນເຕີເນັດແລ້ວ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຕ້ອງຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບ ພ້ອມທັງແນະນຳວິທີການແກ້ໄຂ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຕ້ອງດຳເນີນການແກ້ໄຂທາງດ້ານເຕັກນິກວິຊາການ ຕາມການແຈ້ງເຫດຂອງຜູ້ກ່ຽວຂ້ອງຢ່າງທັນການ.

ໃນກໍລະນີໄດ້ຮັບການແຈ້ງເຫດ ກ່ຽວກັບພຶດຕິກຳ ທີ່ລະເມີດຂໍ້ຫ້າມທີ່ກຳນົດໄວ້ໃນມາດຕາ 22 ຂໍ້ 1, 2, 3 ແລະ 4 ຂອງຂໍ້ຕົກລົງສະບັບນີ້ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຕ້ອງແຈ້ງຫາພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ ເພື່ອປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາຕອບໂຕ້, ຕອບຕ້ານ ຕາມແຕ່ລະກໍລະນີ.

**ມາດຕາ 19 ການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ**

ການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບການກະທຳຜິດທາງລະບົບອິນເຕີເນັດ ຫຼື ການນຳໃຊ້ສື່ສັງຄົມອອນລາຍ ໃຫ້ແຈ້ງ ຫຼື ຍື່ນຕໍ່ ເຈົ້າໜ້າທີ່ຕຳຫຼວດ.

ເຈົ້າໜ້າທີ່ຕຳຫຼວດ ຕ້ອງພິຈາລະນາການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ ບໍ່ເກີນ ສາມວັນລັດຖະການ ນັບແຕ່ມື້ໄດ້ຮັບແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງໃນກໍລະນີມີຄວາມຫຍຸ້ງຍາກສັບສົນ ການພິຈາລະນາດັ່ງກ່າວ ແມ່ນບໍ່ເກີນ ເຈັດວັນ ລັດຖະການ.

## ໝວດທີ 4
## ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການອິນເຕີເນັດ

**ມາດຕາ 20 ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການອິນເຕີເນັດ**

ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການອິນເຕີເນັດ ມີດັ່ງນີ້:

1. ລະງັບການເຂົ້າເຖິງຂໍ້ມູນ ຂ່າວສານ, ຕັດການເຊື່ອມຕໍ່ຊົ່ວຄາວ ຫຼື ຍາວນານ, ຮັກສາຂໍ້ມູນ ຂອງຜູ້ໃຊ້ບໍລິການທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ກົດໝາຍລະບຽບການອື່ນທີ່ກ່ຽວຂ້ອງ ຕາມຄໍາສັ່ງຂອງອົງການຄຸ້ມຄອງ;
2. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ;
3. ປະຕິບັດຕາມມາດຕະຖານການເຊື່ອມຕໍ່ ທີ່ອົງການຈັດຕັ້ງກ່ຽວຂ້ອງກໍານົດອອກ;
4. ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການອິນເຕີເນັດ**

ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການອິນເຕີເນັດ ຫຼື ຂອງເຈົ້າຂອງທະບຽນສ່ວນຕົວໃນສື່ສັງຄົມ ມີດັ່ງນີ້:

1. ຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ເນື້ອໃນຂໍ້ມູນ ຂ່າວສານ ທີ່ຕົນນໍາສະເໜີ, ແລກປ່ຽນ, ສົ່ງ ແລະ ສົ່ງຕໍ່ຜ່ານສັງຄົມອອນລາຍ ຫຼື ຮູບການອື່ນໆ ໃນລະບົບອິນເຕີເນັດ;
2. ຮັບປະກັນຄວາມປອດໄພ ຂອງຂໍ້ມູນ ຂ່າວສານສ່ວນຕົວຂອງຕົນ;
3. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ;
4. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 22 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາໃຊ້ສື່ສັງຄົມອອນລາຍ ມີພຶດຕິກໍາ ດັ່ງນີ້:

1. ໂຄສະນາ, ໃສ່ຮ້າຍປ້າຍສີ, ຕໍ່ຕ້ານແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ຫຼື ມ້າງເພສັນຕິພາບ, ຄວາມເປັນເອກະລາດ, ອະທິປະໄຕ, ຄວາມເປັນເອກະພາບ ແລະ ຄວາມວັດທະນະຖາວອນ ຂອງ ສປປ ລາວ;
2. ເຜີຍແຜ່ຄວາມລັບຂອງຊາດ, ຂອງພັກ, ທາງການທະຫານ ຫຼື ຄວາມລັບດ້ານອື່ນ ທີ່ກໍານົດໄວ້ຢູ່ໃນກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
3. ໂຄສະນາບິດເບືອນ ແລະ ປ່າວຂ່າວອະກຸສົນ ເພື່ອສ້າງຄວາມແບ່ງແຍກ ລະຫວ່າງຊົນເຜົ່າ, ລະຫວ່າງຊາດ ແລະ ສາສະໜາ;
4. ຍຸຍົງ ແລະ ສົ່ງເສີມ ການເຄື່ອນໄຫວທີ່ເປັນການກໍ່ການຮ້າຍ, ການຄາດຕະກໍາ, ການໃຊ້ຄວາມຮຸນແຮງ, ການກົ່ນແກ້ງ, ການຫຼອກລວງ ແລະ ປັ່ນປ່ວນຕໍ່ສັງຄົມ;
5. ໂຄສະນາຄ້າຂາຍຢາເສບຕິດ, ອາວຸດເສິກ, ຄ້າມະນຸດ, ຄ້າປະເວນີ ແລະ ສິ່ງຜິດກົດໝາຍ;
6. ຕົວະຍົວະ, ຫຼອກລວງ, ຊວນເຊື່ອ, ໂຄສະນາເກີນຈິງ, ເຜີຍແຜ່, ສົ່ງ, ສົ່ງຕໍ່ ຫຼື ມີຄໍາເຫັນສົ່ງເສີມຕໍ່ກັບຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງ ແລະ ບິດເບືອນຄວາມຈິງ ທີ່ສ້າງຄວາມເສຍຫາຍທາງດ້ານຊັບສິນ, ເຊື່ອມເສຍຕໍ່ກຽດສັກສີ ຫຼື ສິດທິສ່ວນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ນໍາໃຊ້ສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຜີຍແຜ່ ຫຼື ສົ່ງ, ສົ່ງຕໍ່ ຮູບ, ພາບເຄື່ອນໄຫວ, ສຽງ, ວີດີໂອ, ລາຍເຊັນ, ລະຫັດຕ່າງໆ, ເອກະສານສ່ວນຕົວຂອງບຸກຄົນອື່ນ ເຜີຍແຜ່ເພື່ອຜົນປະໂຫຍດ ຫຼື ເພື່ອຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ເປັນເຈົ້າຂອງ;

8. ເຜີຍແຜ່, ສົ່ງ ຫຼື ສົ່ງຕໍ່ ສິ່ງລາມົກອານາຈານ ທີ່ສະແດງອອກຢ່າງຈະແຈ້ງ ເປັນຕົ້ນ ຮູບ, ພາບເຄື່ອນໄຫວ, ສຽງ , ວີດີໂອ ຫຼື ການຕັດຕໍ່ ທີ່ສະແດງອອກຢ່າງຈະແຈ້ງກ່ຽວກັບອະໄວຍະວະເພດ ຫຼື ພຶດຕິກຳທາງເພດ ທີ່ກົດໝາຍເກືອດຫ້າມ ຫຼື ແຕະຕ້ອງເຖິງຮີດຄອງປະເພນີອັນດີງາມຂອງຊາດ ແລະ ແຕະຕ້ອງເຖິງສິດທິ ແລະ ຊັບສິນທາງປັນຍາ ຂອງຜູ້ອື່ນ;

9. ໃສ່ຮ້າຍປ້າຍສີ, ປ້ອຍດ່າ, ໝິ່ນປະໝາດ ແລະ ໃຊ້ຄຳສັບບໍ່ສຸພາບ ເຜີຍແຜ່, ສົ່ງ ຫຼື ສົ່ງຕໍ່ ໃນສື່ສັງຄົມອອນລາຍ;

10.ສົມຮູ້, ຮ່ວມຄິດ, ຍຸໂຍງ, ສົ່ງເສີມ, ບັງຄັບໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃຫ້ມີພຶດຕິກຳ ທີ່ລະເມີດຂໍ້ຕົກລົງສະບັບນີ້;

11.ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການອື່ນ.

**ມາດຕາ 23 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງ ພັກ-ລັດ, ທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຜ່ານລະບົບອິນເຕີເນັດ ຫຼື ຜ່ານສື່ສັງຄົມອອນລາຍ;
2. ກົດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານ ກ່ຽວກັບຂໍ້ມູນການກະທຳຜິດທາງລະບົບອິນເຕີເນັດ ຫຼື ສື່ສັງຄົມອອນລາຍ;
3. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ ແລະ ພັກພວກ;
4. ປະລະໜ້າທີ່ຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 24 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການອິນເຕີເນັດ**

ຫ້າມຜູ້ໃຫ້ບໍລິການອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ລຶບຂໍ້ມູນຂອງຜູ້ຊົມໃຊ້ທີ່ຈໍລະຈອນໃນລະບົບເຄືອຂ່າຍຂອງຕົນ ທີ່ສ້າງຄວາມເສຍຫາຍຜ່ານລະບົບອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ກ່ອນ ເກົ້າສິບວັນ;
2. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ໃຫ້ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ;
3. ເປີດເຜີຍຂໍ້ມູນຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;
4. ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ທີ່ກະທຳຜິດທາງລະບົບອິນເຕີເນັດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ອົງການຄຸ້ມຄອງ

**ມາດຕາ 25 ອົງການຄຸ້ມຄອງ**

ອົງການຄຸ້ມຄອງວຽກງານການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ ຂັ້ນແຂວງ, ເມືອງ ແລະ ບ້ານ ປະກອບມີດັ່ງນີ້:

1. ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ຫ້ອງການ ຫຼື ໜ່ວຍງານ ເຕັກໂນໂລຊີ ແລະ ການສື່ສານ ເມືອງ;
2. ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ ແຂວງ, ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ ເມືອງ;
3. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ;
4. ພະແນກ ສຶກສາທິການ ແລະ ກີລາ ແຂວງ, ຫ້ອງການ ສຶກສາທິການ ແລະ ກີລາ ເມືອງ;
5. ອົງການຈັດຕັ້ງພັກ-ລັດ ຂັ້ນແຂວງ ແລະ ຂັ້ນເມືອງ;

6. ອົງການປົກຄອງບ້ານ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ**

1. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພໄຊເບີ, ການຄຸ້ມຄອງຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ;

2. ຂຶ້ນແຜນສ້າງ, ຝຶກອົບຮົມ, ຍົກລະດັບ ແລະ ພັດທະນາບຸກຄະລາກອນກ່ຽວກັບວຽກງານຄວາມປອດໄພໄຊເບີ ແລ້ວສະເໜີຕໍ່ຂັ້ນເທິງ;

3. ຮັບແຈ້ງເຫດສຸກເສີນ ທາງລະບົບຄອມພິວເຕີ ແລ້ວລາຍງານ ຕໍ່ສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງລະບົບຄອມພິວເຕີ;

4. ຕິດຕາມ ແລະ ກວດກາ ການເຜີຍແຜ່ ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ;

5. ແຈ້ງຄວາມ, ລາຍງານການກະທຳຜິດທາງດ້ານລະບົບອິນເຕີເນັດ ຕໍ່ອົງການສືບສວນ-ສອບສວນ;

6. ຄົ້ນຄວ້າ, ພັດທະນາ, ປັບປຸງກົນໄກ, ເຕັກນິກ, ວິທີການ ແລະ ຂັ້ນຕອນໃນການປ້ອງກັນ, ການກວດສອບ, ການຕອບໂຕ້, ການຮັບແຈ້ງເຫດ ແລະ ການລາຍງານ ເຫດສຸກເສີນກ່ຽວກັບຄວາມປອດໄພໄຊເບີ, ອາຊະຍາກຳທາງລະບົບຄອມພິວເຕີ, ບັນຫາ, ປະກົດການຫຍໍ້ທໍ້ ໃນການນຳໃຊ້ສື່ສັງຄົມອອນລາຍ ແລະ ຂໍ້ມູນຂ່າວສານຜ່ານອິນເຕີເນັດ ພາຍໃນແຂວງ;

7. ແຈ້ງໃຫ້ ຜູ້ໃຫ້ບໍລິການອິນເຕີເນັດ ລະງັບການເຂົ້າເຖິງ ຂໍ້ມູນ ຂ່າວສານ, ຕັດການເຊື່ອມຕໍ່ຊົ່ວຄາວ ຫຼື ຍາວນານ, ຮັກສາຂໍ້ມູນ, ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນກ່ຽວກັບການກະທຳຜິດທາງສື່ສັງຄົມອອນລາຍ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອດຳເນີນມາດຕະການຕໍ່ຜູ້ກະທຳຜິດ ທີ່ລະເມີດບັນດາຂໍ້ຫ້າມຂອງຂໍ້ຕົກລົງສະບັບນີ້ ແລະ ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

8. ຮັບ ແລະ ພິຈາລະນາການສະເໜີ ຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການອິນເຕີເນັດ ແລະ ສັງຄົມ ກ່ຽວກັບການເຜີຍແຜ່ ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ຫຼື ການນຳໃຊ້ສື່ສັງຄົມອອນລາຍ;

9. ປະສານສົມທົບ ແລະ ໃຫ້ການຮ່ວມມືກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຕິດຕາມຊອກຫາ, ສືບຫາ ແລະ ການດຳເນີນຄະດີຕໍ່ ຜູ້ກະທຳຜິດຜ່ານລະບົບອິນເຕີເນັດ ຫຼື ສື່ສັງຄົມອອນລາຍ;

10.ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕໍ່ກັບການນຳໃຊ້ສື່ສັງຄົມອອນລາຍ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

11.ປະສານງານ, ຮ່ວມມືກັບສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງລະບົບຄອມພິວເຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ;

12.ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການພັດທະນາບຸກຄະລາກອນ ແລະ ຫຼັກສູດການຝຶກອົບຮົມດ້ານວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ຄວາມປອດໄພໄຊເບີ;

13.ເກັບກຳສະຖິຕິ ກ່ຽວກັບບັນຫາການນຳໃຊ້ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ;

14.ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕໍ່ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

15.ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຫ້ອງການ ຫຼື ໜ່ວຍງານ ເຕັກໂນໂລຊີ ແລະ ການສື່ສານ ເມືອງ**

1. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພໄຊເບີ, ການຄຸ້ມຄອງຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ໃນຂອບເຂດເມືອງຕົນ;

2. ຂຶ້ນແຜນສ້າງ, ຝຶກອົບຮົມ, ຍົກລະດັບ ແລະ ພັດທະນາບຸກຄະລາກອນກ່ຽວກັບວຽກງານຄວາມປອດໄພໄຊເບີ ແລ້ວສະເໜີຕໍ່ຂັ້ນເທິງ;

3. ຕິດຕາມ ແລະ ກວດກາ ການເຜີຍແຜ່ ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ໃນຂອບເຂດເມືອງຕົນ;

4. ແຈ້ງຄວາມ, ລາຍງານການກະທຳຜິດທາງດ້ານລະບົບອິນເຕີເນັດ ຕໍ່ອົງການສືບສວນ-ສອບສວນ ຂັ້ນເມືອງ;

5. ປະສານສົມທົບ ແລະ ໃຫ້ການຮ່ວມມືກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຕິດຕາມຊອກຫາ, ສືບຫາ ແລະ ການດຳເນີນຄະດີຕໍ່ ຜູ້ກະທຳຜິດຜ່ານລະບົບອິນເຕີເນັດ ຫຼື ສື່ສັງຄົມອອນ;

6. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕໍ່ກັບການນຳໃຊ້ສື່ສັງຄົມອອນລາຍ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

7. ເກັບກຳສະຖິຕິ ກ່ຽວກັບບັນຫາການນຳໃຊ້ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ໃນຂອບເຂດເມືອງຕົນ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕໍ່ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ**

1. ຕິດຕາມ, ກວດກາ, ໄຈ້ແຍກ ແລະ ວິເຄາະເນື້ອໃນຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

2. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ, ຕອບໂຕ້, ຕອບຕ້ານ, ຖະແຫຼງ ແລະ ເຜີຍແຜ່ຂ່າວສານຢ່າງເປັນທາງການ ເພື່ອຊີ້ແຈງກ່ຽວກັບຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງໂດຍໄວ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງແຫຼ່ງຂໍ້ມູນ ຂ່າວສານ ທີ່ກະທົບຕໍ່ ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

4. ຄົ້ນຄວ້າ, ພິຈາລະນາອອກ, ໂຈະ ຫຼື ຖອນ ໃບອະນຸຍາດການບໍລິການຂໍ້ມູນ ຂ່າວສານຜ່ານອິນເຕີເນັດ ແລະ ການນຳໃຊ້ສື່ສັງຄົມອອນລາຍ ເປັນສື່ທາງການ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ**

1. ຕິດຕາມ, ກວດກາ, ໄຈ້ແຍກ ແລະ ວິເຄາະເນື້ອໃນຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດເມືອງຕົນ;

2. ປະສານສົມທົບກັບພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ອົງການປົກຄອງເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ, ຕອບໂຕ້, ຕອບຕ້ານ, ຖະແຫຼງ ແລະ ເຜີຍແຜ່ຂ່າວສານຢ່າງເປັນທາງການ ເພື່ອຊີ້ແຈງກ່ຽວກັບຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງໂດຍໄວ ໃນຂອບເຂດເມືອງຕົນ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງແຫຼ່ງຂໍ້ມູນ ຂ່າວສານ ທີ່ກະທົບຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ພາຍໃນເມືອງ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ**

1. ຮັບແຈ້ງຄວາມຈາກ ບຸກຄົນ, ນິຕິບຸກຄົນ ແລະ ອົງການການຈັດຕັ້ງ ໃນກໍລະນີມີການກະທຳຜິດທີ່ທີ່ເປັນໄພຄຸກຄາມພົວພັນເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດ, ກຽດສັກສີ, ຊັບສິນ ແລະ ອື່ນໆ ທີ່ເປັນການກະທຳຜິດ;

2. ເກັບກຳ, ກວດກາ ແລະ ຄົ້ນຄວ້າວິໄຈ ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ທີ່ມີລັກສະນະ ເປັນໄພຄຸກຄາມເຖິງ ຄວາມໝັ້ນຄົງຂອງຊາດ, ຄວາມລັບຂອງຊາດ, ຂອງພັກ ແລະ ຄວາມສະຫງົບຂອງສັງຄົມ;

3. ສືບສວນ-ສອບສວນ ແລະ ດຳເນີນຄະດີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ ລະເມີດຂໍ້ຫ້າມ;

4. ປະສານສົມທົບກັບພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການຄົ້ນຫາຂໍ້ມູນຫຼັກຖານ ແລະ ທີ່ມາຂອງການກະທຳຜິດທາງລະບົບອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ເພື່ອເປັນບ່ອນອີງແກ່ການສືບສວນ-ສອບສວນ;

5. ປະສານສົມທົບກັບພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ກ່ຽວກັບການພັດທະນາບຸກຄະລາກອນດ້ານວຽກງານຄວາມປອດໄພໄຊເບີ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ**

1. ຮັບແຈ້ງຄວາມຈາກ ບຸກຄົນ, ນິຕິບຸກຄົນ ແລະ ອົງການການຈັດຕັ້ງ ໃນກໍລະນີມີການກະທຳຜິດທີ່ທີ່ເປັນໄພຄຸກຄາມຜົນຜັນເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດ, ກຽດສັກສີ, ຊັບສິນ ແລະ ອື່ນໆ;

2. ສືບສວນ-ສອບສວນ ແລະ ດຳເນີນຄະດີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ ລະເມີດຂໍ້ຕົກລົງສະບັບນີ້ ແລະ ກົດໝາຍລະບຽບການອື່ນທີ່ກ່ຽວຂ້ອງ ຕາມຄວາມຮັບຜິດຊອບຕົນ;

3. ປະສານສົມທົບກັບຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການຄົ້ນຫາຂໍ້ມູນຫຼັກຖານ ແລະ ທີ່ມາຂອງການກະທຳຜິດທາງລະບົບອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ເພື່ອເປັນບ່ອນອີງແກ່ການສືບສວນ-ສອບສວນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງພະແນກ ສຶກສາທິການ ແລະ ກິລາ ແຂວງ**

1. ເຜີຍແຜ່ນິຕິກຳຕ່າງໆກ່ຽວກັບການຄຸ້ມຄອງການນຳໃຊ້ອິນເຕີເນັດ, ການນຳໃຊ້ສື່ສັງຄົມອອນລາຍ, ຄວາມຮູ້ດ້ານອິນເຕີເນັດ ແລະ ຄວາມປອດໄພໄຊເບີ, ການປ້ອງກັນຂໍ້ມູນ ໃຫ້ແກ່ພະນັກງານ, ຄູ-ອາຈານ, ນັກຮຽນ, ນັກສຶກສາ ພາຍໃນແຂວງ ເພື່ອສົ່ງເສີມໃຫ້ນັກຮຽນ, ນັກສຶກສາ ໄດ້ນຳໃຊ້ອິນເຕີເນັດ, ສື່ສັງຄົມອອນລາຍ ໄປໃນທາງທີ່ຖືກຕ້ອງ ແລະ ເໝາະສົມ, ຫຼີກເວັ້ນຈາກຜົນກະທົບທາງລົບຂອງການນຳໃຊ້ອິນເຕີເນັດ;

2. ປະສານສົມທົບກັບພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ກ່ຽວກັບການພັດທະນາບຸກຄະລາກອນ ແລະ ຫຼັກສູດການຝຶກອົບຮົມດ້ານວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ຕິດຕາມ, ກວດກາ, ເກັບກຳສະຖິຕິ ແລະ ສະເໜີພາກສ່ວນກ່ຽວຂ້ອງຊ່ວຍແກ້ໄຂບັນຫາ ການນຳໃຊ້ອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ໃນຂົງເຂດວຽກງານການສຶກສາ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງຫ້ອງການ ສຶກສາທິການ ແລະ ກິລາ ເມືອງ**

1. ເຜີຍແຜ່ນິຕິກຳຕ່າງໆ ກ່ຽວກັບການຄຸ້ມຄອງນຳໃຊ້ອິນເຕີເນັດ, ການນຳໃຊ້ສື່ສັງຄົມອອນລາຍ, ຄວາມຮູ້ດ້ານອິນເຕີເນັດ ແລະ ຄວາມປອດໄພໄຊເບີ, ການປ້ອງກັນຂໍ້ມູນ ໃຫ້ແກ່ພະນັກງານ, ຄູ-ອາຈານ, ນັກຮຽນ, ນັກສຶກສາ ໃນຂອບເຂດເມືອງຕົນ ເພື່ອສົ່ງເສີມໃຫ້ນັກຮຽນ, ນັກສຶກສາ ໄດ້ນຳໃຊ້ອິນເຕີເນັດ, ສື່ສັງຄົມອອນລາຍ ໄປໃນທາງທີ່ຖືກຕ້ອງ ແລະ ເໝາະສົມ, ຫຼີກເວັ້ນຈາກຜົນກະທົບທາງລົບຂອງການນຳໃຊ້ອິນເຕີເນັດ;

2. ຕິດຕາມ, ກວດກາ, ເກັບກຳສະຖິຕິ ແລະ ສະເໜີພາກສ່ວນກ່ຽວຂ້ອງຊ່ວຍແກ້ໄຂບັນຫາ ການນຳໃຊ້ອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ໃນຂົງເຂດວຽກງານການສຶກສາ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງອົງການຈັດຕັ້ງພັກ-ລັດ ຂັ້ນແຂວງ ແລະ ຂັ້ນເມືອງ**

1. ຄຸ້ມຄອງການນຳໃຊ້ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ, ການນຳໃຊ້ສື່ສັງຄົມອອນລາຍ ທີ່ກ່ຽວຂ້ອງກັບອົງການຂອງຕົນ ພ້ອມທັງປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອສະກັດກັ້ນ ແລະ ແກ້ໄຂ

ບັນຫາການເຜີຍແຜ່ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ, ການນຳໃຊ້ສິ່ງເສບຕິດ ທີ່ລະເມີດກັບ ຂໍ້ຕົກລົງສະບັບນີ້ ແລະ ກົດໝາຍລະບຽບການອື່ນທີ່ກ່ຽວຂ້ອງ;

2. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

1. ຄຸ້ມຄອງການນຳໃຊ້ຂໍ້ມູນ ຂ່າວສານຜ່ານອິນເຕີເນັດ, ການນຳໃຊ້ສິ່ງເສບຕິດ ທີ່ກ່ຽວຂ້ອງກັບການຄຸ້ມຄອງຂອງຕົນ;

2. ຮັບຄຳສະເໜີ, ຄຳຮ້ອງຟ້ອງ, ຄຳຮ້ອງທຸກ, ໃຫ້ຄວາມ ແລະ ພ້ອມທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕ້ານ ແລະ ສະກັດກັ້ນການເຜີຍແຜ່ ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ທີ່ລະເມີດຂໍ້ຫ້າມ;

3. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຕິດຕາມຊອກຫາ, ສືບຫາ ແລະ ການດຳເນີນຄະດີຕໍ່ ຜູ້ກະທຳຜິດຜ່ານລະບົບອິນເຕີເນັດ, ການນຳໃຊ້ສິ່ງເສບຕິດ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ອົງການກວດກາ

**ມາດຕາ 36 ອົງການກວດກາ**

ອົງການກວດກາວຽກງານການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສິ່ງເສບຕິດ ຢູ່ແຂວງອຸດົມໄຊ ປະກອບດ້ວຍ: ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

**ມາດຕາ 37 ອົງການກວດກາພາຍໃນ**

ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສິ່ງເສບຕິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 38 ອົງການກວດກາພາຍນອກ**

ອົງການກວດກາພາຍນອກ ປະກອບມີຄື:

1. ສະພາປະຊາຊົນແຂວງ;
2. ອົງການກວດສອບແຫ່ງລັດ ປະຈຳພາກເໜືອ2;
3. ອົງການກວດກາລັດແຂວງ, ອົງການກວດກາລັດເມືອງ;
4. ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 39 ເນື້ອໃນກວດກາ**

ເນື້ອໃນກວດກາວຽກງານການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສິ່ງເສບຕິດ ມີເນື້ອໃນດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາ ສິ່ງເສບຕິດ ຢູ່ແຂວງອຸດົມໄຊ;

2. ການຈັດຕັ້ງ ແລະ ເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາ ສິ່ງເສບຕິດ ຢູ່ແຂວງອຸດົມໄຊ;

3. ການເຄື່ອນໄຫວຂອງເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາ ສິ່ງເສບຕິດ ຢູ່ແຂວງອຸດົມໄຊ.

**ມາດຕາ 40 ຮູບການກວດກາ**

ການກວດກາວຽກງານການນໍາໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາ ສື່ສັງຄົມອອນລາຍ ຢູ່ແຂວງອຸດົມໄຊ ມີສາມຮູບການ ດັ່ງນີ້:

1. ກວດກາຕາມປົກກະຕິ ແມ່ນການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາ ອັນແນ່ນອນ;

2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຫຼື ໂດຍມີຂໍ້ມູນວ່າ ມີເຫດການຜິດປົກກະຕິເກີດຂຶ້ນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 41 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງຂໍ້ຕົກລົງບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 43 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກໍານົດໃນຂໍ້ຕົກລົງສະບັບນີ້ ໃນສະຖານເບົາ ຈະຖືກຕັກເຕືອນ, ສຶກສາອົບຮົມ.

**ມາດຕາ 44 ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ລະເມີດຂໍ້ຫ້າມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກລົງວິໄນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 45 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມ ຈະຖືກປັບໃໝຕາມແຕ່ລະກໍລະນີ ດັ່ງນີ້:

1. ຕົວະຍົວະ, ຫຼອກລວງ, ຊວນເຊື່ອ, ໂຄສະນາເກີນຈິງ, ເຜີຍແຜ່, ສົ່ງ ຫຼື ຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງ ແລະ ບິດເບືອນຄວາມຈິງ ທີ່ສ້າງຄວາມເສຍຫາຍທາງດ້ານຊັບສິນ, ເຊື່ອມເສຍຕໍ່ກຽດສັກສີ ຫຼື ສິດທິສ່ວນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືກປັບໃໝ 7.000.000 – 15.000.000 ກີບ;

2. ນໍາໃຊ້ສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ເຜີຍແຜ່ ຫຼື ສົ່ງ, ສົ່ງຕໍ່ ຮູບ, ພາບເຄື່ອນໄຫວ, ສຽງ, ວິດີໂອ, ລາຍເຊັນ, ລະຫັດຕ່າງໆ, ເອກະສານສ່ວນຕົວຂອງບຸກຄົນອື່ນ ເຜີຍແຜ່ ເພື່ອຜົນປະໂຫຍດ ຫຼື ຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ເປັນເຈົ້າຂອງ ຈະຖືກປັບໃໝ 5.000.000 – 10.000.000 ກີບ;

3. ເຜີຍແຜ່, ສົ່ງ ຫຼື ສົ່ງຕໍ່ ສິ່ງລາມົກອານາຈານ ທີ່ສະແດງອອກຢ່າງຈະແຈ້ງ ເປັນຕົ້ນ ຮູບ, ພາບເຄື່ອນໄຫວ, ສຽງ, ວິດີໂອ ຫຼື ການຕັດຕໍ່ ທີ່ສະແດງອອກຢ່າງຈະແຈ້ງກ່ຽວກັບອະໄວຍະວະເພດ ຫຼື ພຶດຕິກໍາທາງເພດ

ທີ່ກົດໝາຍເກືອດຫ້າມ ຫຼື ແຕະຕ້ອງເຖິງຮີດຄອງປະເພນີອັນດີງາມຂອງຊາດ ແລະ ແຕະຕ້ອງເຖິງສິດທິ ແລະ ຊັບສິນທາງປັນຍາ ຂອງຜູ້ອື່ນ ຈະຖືກປັບໃໝ 5.000.000 – 7.000.000 ກີບ;

4. ໃສ່ຮ້າຍປ້າຍສີ, ປ້ອຍດ່າ, ໝິ່ນປະມາດ ແລະ ໃຊ້ຄຳສັບບໍ່ສຸພາບ ເຜີຍແຜ່, ສົ່ງ ຫຼື ສົ່ງຕໍ່ ໃນສື່ສັງຄົມອອນລາຍ ຈະຖືກປັບໃໝ 3.000.000 – 5.000.000 ກີບ;

5. ສົມຮູ້, ຮ່ວມຄິດ, ຍຸໂຍງ, ສົ່ງເສີມ, ບັງຄັບໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃຫ້ມີພຶດຕິກຳ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 1.000.000 – 3.000.000 ກີບ.

**ມາດຕາ 46 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍແກ່ຜູ້ອື່ນຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 47 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ, ກົດໝາຍອື່ນທີ່ກຳນົດໂທດທາງອາຍາ ແລ້ວແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ເປັນເຈົ້າການ ປະສານສົມທົບກັບ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ພະແນກສຶກສາທິການ ແລະ ກິລາ ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

ພະແນກການ, ອົງການທຽບເທົ່າຂັ້ນແຂວງ, ຂັ້ນເມືອງ, ອົງການປົກຄອງບ້ານ, ອົງການຈັດຕັ້ງທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ, ທັງພາຍໃນ ແລະ ຕ່າງປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 49 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ເຈົ້າແຂວງ

ແຂວງຊຽງຂວາງ ... ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ